ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ເລກທີ 155 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 03.09.2008

# ດຳລັດ

## ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສ.ປ.ປ.ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງສາທາລະນະສຸກ ສະບັບເລກທີ 114/ນຍ, ລົງວັນທີ 04 ກໍລະກົດ 2008;
- ອີງຕາມ ດຳລັດ ວ່າດ້ວຍການໂອນ ຄະນະວິທະຍາສາດການແພດ ແລະ ໂຮງໝໍເຊດຖາທິຣາດ ໃຫ້ຂຶ້ນກັບກະຊວງສາທາລະນະສຸກ ແລ້ວສ້າງເປັນມະຫາວິທະຍາໄລວິທະຍາສາດສຸຂະພາບ ສະບັບເລກທີ 156/ນຍ, ລົງວັນທີ 21 ພຶດສະພາ 2007;
- ອີງຕາມ ໃບສະເໜີ ຂອງ ທ່ານລັດຖະມົນຕີວ່າການ ກະຊວງສາທາລະນະສຸກ ສະບັບເລກທີ 556/ກຊສ, ລົງວັນທີ 21 ສິງຫາ 2008;
- ອີງຕາມ ໃບສະເໜີ ຂອງ ທ່ານຫົວໜ້າທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ສະບັບເລກທີ 97/ທປຄ, ລົງວັນທີ 29 ສິງຫາ 2008;

### ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ I
### ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ມະຫາວິທະຍາໄລວິທະຍາສາດສຸຂະພາບ (ເອີ້ນຫຍໍ້ວ່າ "ມ.ວ.ສ"), ຊື່ເປັນພາສາຝຣັ່ງ: **Université des Sciences de laSanté** ( ເອີ້ນຫຍໍ້ວ່າ **"USS"** ) ແລະ ຊື່ເປັນພາສາອັງກິດ: **University of Health Sciences** (ເອີ້ນຫຍໍ້ວ່າ **"UHS"**) ແມ່ນສະຖາບັນການສຶກສາໜຶ່ງ ທີ່ສັງກັດໃນໂຄງປະກອບກົງຈັກຂອງກະຊວງສາທາລະນະສຸກ, ມີພາລະບົດບາດກໍ່ສ້າງຊັບພະຍາກອນມະນຸດ ເພື່ອສຸຂະພາບໃນທຸກລະດັບ, ຄົ້ນຄ້ວາວິທະຍາສາດ ແລະ ໃຫ້ການບໍລິການດ້ານວິຊາການການແພດໃຫ້ແກ່ປະຊາຊົນບັນດາເຜົ່າ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

**3.1** ດ້ານການຮຽນ, ການສອນ ແລະ ການຝຶກອົບຮົມ

1. ກໍ່ສ້າງຊັບພະຍາກອນມະນຸດໃຫ້ມີຄຸນທາດການເມືອງ, ຄຸນສົມບັດທີ່ດີ, ມີລະດັບຄວາມຮູ້ ແລະ ຄວາມສາມາດດ້ານວິຊາສະເພາະສູງ;
2. ກໍ່ສ້າງ ແລະ ບຳລຸງຍົກລະດັບໃຫ້ແກ່ຜູ້ເຂົ້າຮຽນ ນັບແຕ່ລະດັບຊັ້ນສູງ, ປະລິນຍາຕີ, ປະລິນຍາໂທ ຈົນເຖິງປະລິນຍາເອກ ກ່ຽວກັບວິຊາການແພດ, ທັນຕະແພດ, ເພສັດຊະກອນ, ພະຍາບານ, ວິເຄາະ, ລັງສີ, ນັກສາທາລະນະສຸກ ແລະ ອື່ນໆ;
3. ຈັດສຳມະນາ ແລະ ກອງປະຊຸມຕ່າງໆ ທີ່ຈຳເປັນ;
4. ປັບປຸງ ແລະ ຍົກລະດັບຄຸນນະພາບການຮຽນ, ການສອນ, ລະດັບວິທະຍາສາດ ຂອງຖັນແຖວຄູອາຈານ ແລະ ຂອງຜູ້ທີ່ປະກອບສ່ວນໃນການສິດສອນໃນແຕ່ລະຂະແໜງວິຊາ ຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ;
5. ສົມທົບກັບກະຊວງສຶກສາທິການ, ສະຖາບັນການສຶກສາ ແລະ ທົ່ວໜ່ວຍວິຊາການຕ່າງໆ ເພື່ອສ້າງຫຼັກສູດ, ຕຳລາການຮຽນ-ການສອນຂະແໜງວິຊາຕ່າງໆ ໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງປະເທດໃນແຕ່ລະໄລຍະ, ສອດຄ່ອງກັບລະດັບສາກົນ ແລະ ຕ່າງປະເທດ;
6. ກຳນົດລະບຽບການ ແລະ ຈັດຕັ້ງປະຕິບັດຢ່າງຖືກຕ້ອງ, ສອດຄ່ອງ, ໂປ່ງໃສ ແລະ ເປັນທຳ ກ່ຽວກັບການສອບເສັງຄັດເລືອກເອົານັກສຶກສາສາມັນ ແລະ ພະນັກງານເຂົ້າຮຽນ; ສອບເສັງເລື່ອນຊັ້ນ ແລະ ຈົບຊັ້ນໃນທຸກລະດັບ;
7. ຈັດຕັ້ງການສອບເສັງ, ການມອບໃບປະກາສະນີຍະບັດ ຫຼື ໃບຢັ້ງຢືນຕ່າງໆ ຕາມຂອບເຂດສິດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ.

**3.2** ດ້ານການຄົ້ນຄ້ວາວິທະຍາສາດ

1. ສ້າງແຜນການ ແລະ ຈັດຕັ້ງດຳເນີນການຄົ້ນຄວ້າວິທະຍາສາດ ພາຍໃຕ້ຫົວຂໍ້ ແລະ ລະດັບຕ່າງໆ ທີ່ພົວພັນກັບບັນຫາສຸຂະພາບ;

2. ຈັດຕັ້ງເຜີຍແຜ່ຜົນສຳເລັດຂອງການຄົ້ນຄວ້າວິທະຍາສາດ ທີ່ມີຄຸນປະໂຫຍດໃຫ້ແກ່ສັງຄົມ ແລະ ໃຫ້ແກ່ການພັດທະນາຂະແໜງສາຂາລະບະສຸກ ຊຶ່ງເປັນການປະກອບສ່ວນພັດທະນາເສດຖະກິດ-ສັງຄົມຂອງຊາດ; ເຜີຍແຜ່ຂໍ້ມູນຂ່າວສານດ້ານວິທະຍາສາດເຕັກນິກການແພດຢ່າງກວ້າງຂວາງ, ທົ່ວເຖິງ ທັງເປັນພາສາລາວ ແລະ ພາສາຕ່າງປະເທດ.

3.3 ດ້ານການບໍລິການວິຊາການໃຫ້ແກ່ສັງຄົມ

1. ພົວພັນປະສານງານກັບໂຮງໝໍ, ສະຖາບັນ, ສູນ, ໂຄງການ, ໂຮງງານ ແລະ ພາກສ່ວນກ່ຽວຂ້ອງອື່ນໆ ເພື່ອຮັບໃຊ້ການຮຽນ-ການສອນ ແລະ ການຝຶກງານ ໂດຍປະສານສົມທົບລະຫວ່າງການຮຽນທິດສະດີກັບການປະຕິບັດຕົວຈິງຢ່າງກົມກຽວ;
2. ປະກອບຄຳເຫັນ, ຄຳແນະນຳໃຫ້ແກ່ປະຊາຊົນ, ອົງການຈັດຕັ້ງຕ່າງໆທັງພາຍໃນ ແລະ ຕ່າງປະເທດ ດ້ານວິຊາການແພດ, ສາຂາລະບະສຸກ ແລະ ການທົດລອງພິສູດ ( ນິຕິເວດ );
3. ປະກອບສ່ວນປົກປັກຮັກສາ ແລະ ສົ່ງເສີມສິລະປະວັດທະນະທຳຂອງຊາດ.

3.4 ດ້ານການຄຸ້ມຄອງ

1. ຄຸ້ມຄອງພະນັກງານ-ລັດຖະກອນ ຕາມລະບຽບລັດຖະກອນ ແລະ ນະໂຍບາຍຂອງລັດຖະບານ;
2. ຄຸ້ມຄອງ, ດູແລນັກສຶກສາຕາມພາລະບົດບາດ ແລະ ກົດລະບຽບຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ;
3. ຄຸ້ມຄອງຊັບສົມ, ທີ່ດິນຂອງລັດທີ່ຢູ່ໃນຄວາມຮັບຜິດຊອບ ຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ ຕາມລະບຽບກົດໝາຍ;
4. ຄຸ້ມຄອງງົບປະມານ ແລະ ລາຍຮັບ-ລາຍຈ່າຍ ຕາມລະບຽບການ ຂອງກະຊວງການເງິນ;
5. ຄຸ້ມຄອງດູແລຊາວຕ່າງປະເທດ ທີ່ມາປະຕິບັດໜ້າທີ່ ແລະ ສຶກສາຮໍ່າຮຽນ ຢູ່ມະຫາວິທະຍາໄລວິທະຍາສາດສຸຂະພາບ ຕາມລະບຽບກົດໝາຍ;
6. ຂຶ້ນແຜນຄວາມຕ້ອງການຂອງຕົນ ທາງດ້ານຊັບພະຍາກອນມະນຸດ, ການເງິນ ແລະ ການກໍ່ສ້າງພື້ນຖານໂຄງລ່າງ.

3.5 ຈັດຕັ້ງການເຄື່ອນໄຫວກິດຈະກຳນັກສຶກສາ ເພື່ອປົກປັກຮັກສາ ແລະ ສົ່ງເສີມສິລະປະວັດທະນະທຳອັນດີງາມຂອງຊາດ, ສົມທົບກັບການຮັບເອົາວັດທະນະທຳອັນຍອດຍິ່ງ ແລະ ກ້າວໜ້າຂອງໂລກ; ເສີມສ້າງສຸຂະພາບໂດຍການຈັດຕັ້ງຂະບວນການກິລາກາຍະກຳ, ວິຊາປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບໃນມະຫາວິທະຍາໄລ.

**ມາດຕາ 4. ຂອບເຂດສິດ**

1. ຈັດຕັ້ງການສອບເສັງ ແລະ ມອບໃບປະກາດສະນິຍະບັດຂັ້ນປະລິນຍາເອກ, ຊ່ຽວຊານຂັ້ນສອງ; ເໜືອປະລິນຍາໂທ, ປະລິນຍາໂທ, ຊ່ຽວຊານຂັ້ນໜຶ່ງ; ເໜືອປະລິນຍາຕີລົງເລິກຂະແໜງວິຊາ, ປະລິນຍາຕີ; ວິຊາສະເພາະຂັ້ນສູງ ແລະ ໃບຢັ້ງຢືນອື່ນໆ;

2. ບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຄຸ້ມຄອງ, ປະຕິບັດນະໂຍບາຍຍ້ອງຍໍ ຫຼື ວິໄນຕໍ່ພະນັກງານ, ລັດຖະກອນ ແລະ ນັກສຶກສາຕາມກົດລະບຽບຂອງມະຫາວິທະຍາໄລ ຕາມລະບຽບວ່າດ້ວຍລັດຖະກອນ ແຫ່ງ ສ.ປ.ປ. ລາວ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;
3. ອອກໃບປະກາສະນີຍາບັດ ແລະ ວິທະຍາຖານະ; ປະສານສົມທົບກັບສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ເພສັດຊະກອນ ໃນການອອກໃບອະນຸຍາດປະກອບວິຊາຊີບ;
4. ຄົ້ນຄ້ວາ ແລະ ສະເໜີກະຊວງສາທາລະນະສຸກ ແລະ ລັດຖະບານ ພິຈາລະນາອະນຸມັດ (ຫຼືຮັບຮອງ) ແຜນພັດທະນາ ມະຫາວິທະຍາໄລວິທະຍາສາດສຸຂະພາບ ໃນແຕ່ລະໄລຍະ ພ້ອມທັງຈັດຕັ້ງປະຕິບັດ ພາຍຫຼັງໄດ້ຮັບອະນຸມັດ ( ຫຼືຮັບຮອງເອົາແລ້ວ );
5. ສົມທົບກັບອົງການຕ່າງໆທີ່ກ່ຽວຂ້ອງ ເພື່ອປົກປ້ອງ, ຄຸ້ມຄອງລິຂະສິດດ້ານວິຊາການ ຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ;
6. ສ້າງລາຍຮັບວິຊາການ ຕາມລະບຽບກົດໝາຍ;
7. ພົວພັນ, ເຊັນສັນຍາຮ່ວມມືດ້ານວິຊາການ ກັບສະຖາບັນການສຶກສາ, ມະຫາວິທະຍາໄລຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ບົນພື້ນຖານນະໂຍບາຍ ແລະ ລະບຽບຫຼັກການຂອງລັດຖະບານ;
8. ສະຫຼຸບລາຍງານປະຈຳ 03 ເດືອນ, 06 ເດືອນ ແລະ ປະຈຳປີ ຕໍ່ ກະຊວງ ສາທາລະນະສຸກ; ຂໍຄຳເຫັນ, ຄຳແນະນຳຈາກກະຊວງສາທາລະນະສຸກ ກ່ຽວກັບແນວທາງນະໂຍບາຍ ແລະ ບັນຫາສຳຄັນຕ່າງໆ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ມະຫາວິທະຍາໄລວິທະຍາສາດສຸຂະພາບ ມີຫ້ອງການ ແລະ ຄະນະຕ່າງໆ ທີ່ມີຖານະເທົ່າກັບກົມດັ່ງນີ້:

1. ຫ້ອງການ;
2. ຄະນະແພດສາດ;
3. ຄະນະວິທະຍາສາດພື້ນຖານ;
4. ຄະນະທັນຕະແພດ;
5. ຄະນະເພສັດສາດ;
6. ຄະນະເຕັກນິກການແພດ;
7. ຄະນະພະຍາບານສາດ;
8. ຄະນະຫຼັງມະຫາ.

ນອກຈາກຫ້ອງການ ແລະ ຄະນະຕ່າງໆນີ້ແລ້ວ, ມະຫາວິທະຍາໄລວິທະຍາສາດສຸຂະພາບ ຍັງມີສະພາບໍລິຫານຕື່ມອີກ.

ສ່ວນສະຖາບັນ, ພາກວິຊາ ຫຼື ວິທະຍາໄລອື່ນໆ ທີ່ມີຖານະທີ່ບໍ່ເທົ່າກັນ ມອບໃຫ້ທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກ ຄົ້ນຄວ້າສ້າງຕັ້ງ ຫຼື ຍຸບເລີກຕາມຄວາມເໝາະສົມ ບົນພື້ນຖານກົງຈັກກະທັດລັດ, ສົມເຫດສົມຜົນ.

**ມາດຕາ 6. ໂຄງປະກອບບຸກຄະລາກອນ**

1. ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ປະກອບມີອະທິການບໍດີ **01** ທ່ານ ແລະ ຮອງອະທິການບໍດີຈຳນວນໜຶ່ງ. ນອກນີ້ ຍັງມີຄະນະບໍດີ, ຮອງຄະນະບໍດີ; ຫົວໜ້າ, ຮອງຫົວໜ້າພາກວິຊາ; ຫົວໜ້າ, ຮອງຫົວໜ້າຫ້ອງການ ແລະ ພະນັກງານ-ຄູອາຈານຈຳນວນໜຶ່ງ ຊຶ່ງໄດ້ຮັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ ຫຼື ປົດຕຳແໜ່ງຕາມຂັ້ນຕອນ ແລະ ລະບຽບກົດໝາຍ;
2. ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ ຍັງປະກອບມີ: ປະທານ, ຮອງປະທານ, ກຳມະການ ແລະ ສະມາຊິກສະພາບໍລິຫານຈຳນວນໜຶ່ງ ໂດຍໄດ້ຮັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງຕາມຂັ້ນຕອນ ແລະ ລະບຽບກົດໝາຍ.

## ໝວດທີ IV
## ລະບອບແບບແຜນວິທີເຮັດວຽກ

**ມາດຕາ 7. ແບບແຜນວິທີເຮັດວຽກ**

ມະຫາວິທະຍາໄລ ວິທະຍາສາດສຸຂະພາບ ເຄື່ອນໄຫວ ແລະ ດຳເນີນງານຕາມຫຼັກການດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ປະຕິບັດລະບອບຫົວໜ້າດຽວ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ;
2. ການເຄື່ອນໄຫວ ແລະ ການດຳເນີນງານ ຂອງມະຫາວິທະຍາໄລວິທະຍາສາດສຸຂະພາບ ແມ່ນອີງໃສ່ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ເປັນຕົ້ນແມ່ນແຜນພັດທະນາຊັບພະຍາກອນມະນຸດເພື່ອສຸຂະພາບ ແລະ ແຜນພັດທະນາການສຶກສາແຫ່ງຊາດ, ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການລະອຽດ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ;
3. ພົວພັນ, ປະສານສົມທົບຢ່າງໃກ້ຊິດກັບກະຊວງສາທາລະນະສຸກ, ກະຊວງ, ອົງການທຽບເທົ່າກະຊວງອື່ນໆ ລວມທັງອົງການຈັດຕັ້ງຕ່າງໆ ທີ່ຂຶ້ນກັບກະຊວງສາທາລະນະສຸກ;
4. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ, ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;
5. ປະຕິບັດລະບອບປະຊຸມປະຈຳເດືອນ, **03** ເດືອນ, **06** ເດືອນ, ປະຈຳປີ ແລະ ປະຕິບັດລະ ບອບລາຍງານໃຫ້ຂັ້ນເທິງຕົນ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ V
## ບົດບັນຍັດສຸດທ້າຍ

**ມາດຕາ 8. ງົບປະມານ ແລະ ກາປະທັບ**

ມະຫາວິທະຍາໄລວິທະຍາສາດສຸຂະພາບ ມີງົບປະມານ ແລະ ກາປະທັບ ຂອງຕົນ ເພື່ອເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 9. ການຜັນຂະຫຍາຍ**

ມອບໃຫ້ທ່ານລັດຖະມົນຕີວ່າການກະຊວງສາທາລະນະສຸກກໍານົດລະອຽດ, ສົມເຫດສົມຜົນ ກ່ຽວກັບພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ໂຄງປະກອບການຈັດຕັ້ງ ຂອງຫ້ອງການ, ບັນດາຄະນະວິຊາ ແລະ ສະພາບໍລິຫານ ທີ່ສັງກັດມະຫາວິທະຍາໄລວິທະຍາສາດສຸຂະພາບ.

**ມາດຕາ 10. ການຈັດຕັ້ງປະຕິບັດ**

ຄະນະຈັດຕັ້ງສູນກາງພັກ, ກະຊວງສາທາລະນະສຸກ, ມະຫາວິທະຍາໄລວິທະຍາສາດສຸຂະພາບ, ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ, ບັນດາອົງການທີ່ສັງກັດສໍານັກງານນາຍົກລັດຖະມົນຕີ, ອົງການປົກຄອງແຂວງ, ນະຄອນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 11. ຜົນສັກສິດ**

ດໍາລັດສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**
**ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ບົວສອນ ບຸບຜາວັນ**